


# ທະນາຄານແຫ່ງ ສປປ ລາວສາຂາພາກເໜືອແຂວງຫຼວງພະບາງ ເຜີຍແຜ່ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ




ລະຫວ່າງວັນທີ 19-20 ຕຸລາ 2022 ນີ້, ທີ່ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໂດຍການເຂົ້າຮ່ວມຂອງ ທ່ານ ພູຊິງ ຈັນທະຈັກ, ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ທ່ານ ສັງທອງ ຄຸນຄຳ ຮອງຫົວໜ້າ ຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວພາກເໜືອ ແຂວງຫຼວງພະບາງ, ມີຕາງໜ້າຈາກອົງການປົກຄອງແຂວງ ໄຊຍະບູລີ ແລະຜູ້ຕາງໜ້າຈາກທະນາຄານທຸລະກິດ ແລະສະຖາບັນການເງິນຈຸລະພາກ ຢູ່ພາຍໃນແຂວງເຂົ້າຮ່ວມ.

ທ່ານ ສັງທອງ ຄຸນຄຳ ຮອງຫົວໜ້າ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ກ່າວວ່າ: ກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ແລະນິຕິກຳທີ່ກ່ຽວຂ້ອງກັບວຽກງານຕ້ານ ສະກັດກັ້ນ ການ

ຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຄັ້ງນີ້, ເປັນສະບັບປັບປຸງໃໝ່ ເລກທີ 184/ລບ, ລົງວັນທີ 20 ໃນປີ 2022 ນີ້, ມີທັງໝົດ 8 ພາກ, 2 ໝວດ ແລະ 113 ມາດຕາ ແມ່ນໄດ້ປັບປຸງຈາກ ສະບັບ ປີ 2012 ທີ່ກ່ຽວຂ້ອງກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຕິດພັນກັບສະຖາບັນການເງິນຈຸລະພາກ ໃນສະພາບທີ່ການເງິນຈຸລະພາກ ທີ່ຮັບເງິນຝາກ ແລະບໍ່ຮັບເງິນຝາກທີ່ຢູ່ໃນພາວະອ່ອນແອ, ສໍາລັບໂຄງການການເງິນຈຸລະພາກ ຊຶ່ງເປັນກອງທຶນບ້ານ ຫຼືທະນາຄານບ້ານ ກໍໄດ້ກໍານົດກ່ຽວກັບການສ້າງຕັ້ງ ແລະການຄຸ້ມຄອງຢ່າງຈະແຈ້ງ ພ້ອມນັ້ນຍັງຈະໄດ້ຮັບຟັງການນໍາສະເໜີຂັ້ນຕອນການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ ແລະຂັ້ນຕອນການລາຍງານທຸລະກໍາດ້ານການເງິນ, ຊຶ່ງບັນດາເນື້ອໃນຕ່າງໆນັ້ນ ເປັນກົນໄກການຈັດຕັ້ງປະຕິບັດທີ່ລະອຽດ ແລະສໍາຄັນ ສໍາລັບສະຖາບັນການເງິນຈຸລະພາກ ຕາມກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ, ດໍາລັດວ່າດ້ວຍ ສະຖາບັນການເງິນຈຸລະພາກໄດ້ມີການປັບປຸງຫຼາຍມາດຕາ ຈາກສະບັບເກົ່າ ປີ 2012 ເພື່ອໃຫ້ສອດຄ່ອງກັບສະພາບເງື່ອນໄຂໃນປະຈຸບັ

**ຂ່າວ: ສຸດທິສັກ ຫວັງສະຫວັດ**







ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ